**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0703 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 07 ມິຖຸນາ 2022

# ແຈ້ງການ

ເຖິງ: ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

ເລື່ອງ: ແຈ້ງປັບລົງລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 103/ຄປຈ, ລົງວັນທີ 09 ພຶສະພາ 2022.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 631/ຫສນຍ, ລົງວັນທີ 09 ພຶດສະພາ 2022.
- ອີງຕາມ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 06 ມິຖຸນາ 2022.

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ໃຫ້ປະຕິບັດລາຄາຂາຍຍ່ອຍໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 27,920 | 19,830 | 19,420 |
| 2 | ແຂວງຜົ້ງສາລີ | 28,560 | 20,470 | 20,060 |
| 3 | ແຂວງຫຼວງນ້ຳທາ | 28,280 | 20,190 | 19,780 |
| 4 | ແຂວງອຸດົມໄຊ | 28,400 | 20,310 | 19,900 |
| 5 | ແຂວງບໍ່ແກ້ວ | 28,020 | 19,930 | 19,520 |
| 6 | ແຂວງຫຼວງພະບາງ | 28,290 | 20,200 | 19,790 |
| 7 | ແຂວງໄຊຍະບູລີ | 28,170 | 20,080 | 19,670 |
| 8 | ແຂວງຫົວພັນ | 28,320 | 20,230 | 19,820 |
| 9 | ແຂວງຊຽງຂວາງ | 28,110 | 20,020 | 19,610 |
| 10 | ແຂວງວຽງຈັນ | 27,920 | 19,830 | 19,420 |
| 11 | ແຂວງບໍລິຄຳໄຊ | 28,000 | 19,910 | 19,500 |
| 12 | ແຂວງຄຳມ່ວນ | 27,950 | 19,860 | 19,450 |
| 13 | ແຂວງສະຫວັນນະເຂດ | 27,950 | 19,860 | 19,450 |
| 14 | ແຂວງສາລະວັນ | 28,130 | 20,040 | 19,630 |
| 15 | ແຂວງຈຳປາສັກ | 27,980 | 19,890 | 19,480 |
| 16 | ແຂວງເຊກອງ | 28,130 | 20,040 | 19,620 |
| 17 | ແຂວງອັດຕະປື | 28,160 | 20,070 | 19,660 |
| 18 | ແຂວງໄຊສົມບູນ | 28,200 | 20,110 | 19,700 |

- ລາຄາໃໝ່ນີ້ ແມ່ນໃຫ້ເລີ່ມປະຕິບັດ ວັນທີ 08 ມິຖຸນາ 2022; ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
- ການປັບລາຄາຄັ້ງນີ້ ແມ່ນ ໄດ້ປັບລົງລາຄາຂາຍຍ່ອຍ ນ້ຳມັນແອັດຊັງພິເສດ 150 ກີບ/ລິດ, ລາຄານ້ຳມັນແອັດຊັງທຳມະດາ ປັບລົງ 2.060 ກີບ/ລິດ ແລະ ລາຄານ້ຳມັນກາຊວນ ປັບລົງ 920 ກີບ/ລິດ; ໄດ້ຫຼຸດອາກອນຊົມໃຊ້ ແອັດຊັງທຳມະດາ ລົງ ຈາກ 16% ມາເປັນ 5% ແລະ ຫຼຸດອາກອນຊົມໃຊ້ ກາຊວນ ລົງ ຈາກ 11% ມາເປັນ 0%.
- ການຄິດໄລ່ເສຍພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0465/ກຄພນ, ລົງວັນທີ 07 ມິຖຸນາ 2022 ຈົນກວ່າຈະມີການປ່ຽນແປງ.
- ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 0674/ອຄ, ລົງວັນທີ 31 ພຶດສະພາ 2022.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ລັດຖະມົນຕີ**

ກະຊວງອຸດສາຫະກຳ ແລະ ການຄ້າ

ປອ.ຄຳແພງ ໄຊສົມແພງ

<u>ບ່ອນສົ່ງ</u>

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).